ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ
LaoCultureTourismPublicGroupCompany

ເລກທີ: 172 /ບທລວ

ວັນທີ: 17 NOV 2026

ບົດລາຍງານ

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

ທ່ານ ຜູ້ອຳນວຍການໃຫຍ່ຂອງຕະຫຼາດຫຼັກຊັບລາວ

ທ່ານ ຜູ້ຖືຮຸ້ນຂອງບໍລິສັດ ກຸ່ມທ່ອງທ່ຽວວັດທະນະທຳລາວ ມະຫາຊົນ.

ເລື່ອງ: ຊີ້ແຈງສາເຫດທີ່ບໍ່ສາມາດເປີດເຜີຍເອກະສານລາຍງານການເງິນ ປະຈຳໄຕມາດ 3 ປະຈຳປີ 2026 ຂອງກຸ່ມ ບໍລິສັດໄດ້ຕາມກຳນົດ.

- ອີງຕາມ: ແຈ້ງການວ່າດ້ວຍການເປີດເຜີຍຂໍ້ມູນຕາມຮອບວຽນບັນຊີ ປະຈຳໄຕມາດ 3 ປີ 2026 ຂອງບໍລິສັດ ຈົດທະບຽນໃນ ຕະຫຼາດຫຼັກຊັບລາວ ສະບັບເລກທີ 1469/ຕລຊລ, ລົງວັນທີ 29 ຕຸລາ 2026.

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະລາວ ມະຫາຊົນ ຂໍຮຽນລາຍງານມາຍັງທ່ານ ເພື່ອຊາບກ່ຽວກັບ ສາເຫດທີ່ ບໍລິສັດບໍ່ສາມາດເປີດເຜີຍເອກະສານລາຍງານການເງິນ ປະຈຳໄຕມາດ 3 ປະຈຳປີ 2026 ໄດ້ຕາມກຳນົດ ເນື່ອງ ຈາກວ່າ ໃນໄລຍະຜ່ານມາ ບໍລິສັດມີແຜນການປັບປຸງ ແລະ ພັດທະນາລະບົບການບັນຊີ ແລະ ການ ລາຍງານການເງິນ ເພື່ອກະກຽມຄວາມພ້ອມໃນການປັບຕົວໃຫ້ສອດຄ່ອງກັບມາດຕະຖານການລາຍງານການເງິນສາກົນ (IFRS) ໃນ ອະນາຄົດ. ສິ່ງຜົນໃຫ້ມີການທົບທວນຂັ້ນຕອນການຈັດເກັບຂໍ້ມູນ, ການຈັດໝວດໝູ່ບັນຊີ ແລະ ການຈັດກຽມ ຂໍ້ມູນທາງການເງິນ. ນອກຈາກນັ້ນ ຝ່າຍບັນຊີຍັງຕ້ອງໃຊ້ເວລາໃນການລວບລວມ, ກວດສອບ ແລະ ກວດຖານ ຂໍ້ມູນທາງບັນຊີໃຫ້ຄົບຖ້ວນ ເພື່ອ ໃຫ້ລາຍງານການເງິນມີຄວາມຖືກຕ້ອງ ແລະ ໜ້າເຊື່ອຖື. ດັ່ງນັ້ນ ຈຶ່ງເຮັດໃຫ້ ການຈັດກຽມລາຍງານການເງິນປະຈຳໄຕມາດ 3 ປະຈຳປີ 2026 ມີຄວາມລ່າຊ້າ ແລະ ບໍ່ສາມາດເປີດເຜີຍໄດ້ຕາມ ກຳນົດ.

ດ້ວຍເຫດຜົນດັ່ງກ່າວ ຈຶ່ງເຮັດໃຫ້ການຈັດກຽມ ແລະ ເປີດເຜີຍເອກະສານລາຍງານການເງິນຂອງ ບໍລິສັດມີ ຄວາມລ່າຊ້າ ແລະ ບໍ່ສາມາດດຳເນີນໄດ້ຕາມກຳນົດເວລາ.

ຕໍ່ບັນຫາດັ່ງກ່າວ, ບໍລິສັດຈະເລັ່ງປະສານງານກັບພະແນກການທີ່ກ່ຽວຂ້ອງເພື່ອສຳເລັດການລວບລວມ ແລະ ກວດຖານຂໍ້ມູນທາງການເງິນໃຫ້ຖືກຕ້ອງຄົບຖ້ວນ ແລະ ຈະດຳເນີນການເປີດເຜີຍເອກະສານລາຍງານການເງິນ ບໍ່ໃຫ້ ກາຍ ວັນທີ 19 ພະຈິກ ປີ 2026 .

ດັ່ງນັ້ນ ຈຶ່ງຮຽນມາຍັງທ່ານ ເພື່ອຊາບ ແລະ ພິຈາລະນາຮັບຊາບການຊີ້ແຈງດັ່ງກ່າວດ້ວຍ.

ຮຽນດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ.

ຜູ້ອຳນວຍການ ບໍລິສັດ

ບ້ານໂພນພະເນົາ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ສປປ ລາວ
PhonphanaoVillage,SaysetthaDistrict,Vientiane Capital,Lao PDR
Tel: (856-21) 451116, 451222, Facebook: LaoCultureTourismPublicGroup Company